ກົດຫມາຍປ້ອງກັນຄວາມຮຸນແຮງໃນຊາວຫນຸ່ມ ຂອງເມືອງຊີອາເຕີນ

ເບື້ອງຫລັງ

ກົດຫມາຍ **Seattle Youth Violence Prevention Initiative** ໄດ້ຕໍ່ສູ້ກັບບັນຫາຂອງຄວາມຮຸນແຮງຂອງຊາວຫນຸ່ມດ້ວຍການເຂົ້າເຖິງທີ່ຄົບຖ້ວນ ຊຶ່ງລວມໃສ່ກັນທັງສະດີອີງໃສ່ຫລັກຖານພ້ອມທັງໂຄງການທີ່ຖືກກໍ່ຕັ້ງຂຶ້ນຂອງຊາວຫນຸ່ມໃຫຍ່ໄວໃນບ້ານແລະຊຸມນຸມອິນ.ໃນຂະນະທີ່ເມືອງຊີອາເຕີນໄດ້ປະສົບພົບກັບອັດຕາອາສຍາກັມຕ່ຳສຸດບາງຢ່າງໃນຫລາຍໆປີຜ່ານມາ, ຈຳນວນເຫດການຂອງອາສຍາກັມຮ້າຍແຮງຂອງຊາວຫນຸ່ມຄຳເນີນທີ່ຈະເປັນບັນຫາຂອງຊຸມນຸມອິນອັນສຳຄັນທີ່ສຸດ.ທາງເມືອງໄດ້ວາງໃຊ້ກົດຫມາຍໃນເດືອນຈຸນລາຍ2009 ເພື່ອຈະປ່ຽນແປງໃນການທີ່ທາງເມືອງແກ້ໄຂນຳຄວາມຮຸນແຮງຊາວຫນຸ່ມແນວໃດ.

ຈຸດເປົ້າຫມາຍ

ຈຸດເປົ້າຫມາຍຂອງກົດຫມາຍແມ່ນເພື່ອຈະບັນລຸການລຸດລົງ 50%ໃນການສົ່ງຕໍ່ໄປຫາສານເຍົາວະຊົນຍ້ອນຄວາມຮຸນແຮງແລະການລຸດລົງ50%ໃນການໂຈະສັ່ງພັກແລະການໄລ່ອອກຈາກໂຮງຮຽນມີເດີນສະກຸລບາງບ່ອນຍ້ອນເຫດການທີ່ກ່ຽວຂ້ອງນຳຄວາມຮຸນແຮງ.

ໃຜມີເງື່ອນໄຂໄດ້ຮັບ?

ກົດຫມາຍມຸ່ງໃສ່ຊາວຫນຸ່ມປະມານ 800 ຄົນທີ່ມີອາຍຸ 12-17 ປີຜູ້ທີ່:

- ໄດ້ຖືກຕັດສິນລົງໂທດໃນຄວາມຜິດຮ້າຍແຮງແລະຖືກປ່ອຍຕົວອອກມາ;
- ໄດ້ຖືກຈັບກຸມແຕ່ວ່າບໍ່ໄດ້ຖືກກັກຕົວເອົາໄວ້;
- ເປັນນັກຮຽນຂອງໂຮງຮຽນມີເດີນສະກຸລຢູ່ໃນການສ່ຽງຕໍ່ການຂາດໂຮງຮຽນໂດຍບໍ່ໄດ້ຮັບອະນຸຍາດເລື້ອຍໆຫລືການໂຈະສັ່ງພັກຫລາຍໆຄັ້ງຍ້ອນການປະພຶດຮ້າຍແຮງ;ແລະ/ຫລື
- ໄດ້ຖືກເຄາະຮ້າຍຈາກເຫດການຮ້າຍແຮງໃນຫມູ່ບ້ານ.

ຈຳພວກຊາວຫນຸ່ມທີ່ຈະຖືກຮັບໃຊ້ແມ່ນກວ້າງຂວາງຫລາຍ ແລະຄວາມຕ້ອງການຂອງເຂົາເຈົ້າແມ່ນແຕກຕ່າງກັນໄປ. ຊາວຫນຸ່ມບາງຄົນທີ່ມີຄວາມຕ້ອງການສູງຈະໄດ້ຮັບການບໍລິການອັນລະອຽດຄົບຖ້ວນ,ອີງຕາມການປິ່ນປົວ.ຄົນອື່ນຈະໄດ້ຮັບການບໍລິການທີ່ຈະຊ່ວຍເຂົາເຈົ້າເຂົ້າເຖິງໂອກາດທີ່ຈະທຳການເລືອກເອົາທາງເລືອກທີ່ມີຜົນດີ.

ກົດຫມາຍຂອງເມືອງຊີອາເຕີນຮີບໂຮມເຂົ້າໃສ່ກັນການຊີ້ນຳແລະພາກສ່ວນຕ່າງໆຈາກໂຄງການປ້ອງກັນຄວາມຮຸນແຮງທີ່ມີຜົນສຳເລັດຢູ່ໃນເມືອງອື່ນ.ຂ່າວແຈ້ງທີ່ແນ່ນອນອັນນຶ່ງທີ່ຜ່ານອອກມາທີ່ເປັນສຽງດັງແລະແຈ່ມແຈ້ງຈາກເມືອງອື່ນແມ່ນວ່າລັດຖະບານບໍ່ຄວນຈະສົ່ງການໃນຣາຍຣະອຽດຂອງແຜນການຂອງກົດຫມາຍທຸກໆຢ່າງ. ເພື່ອເປັນການຮັກສາຄຳແນະນຳອັນນີ້ໄວ້,ເມືອງໄດ້ອອກແບບແຜນການທີ່ຖືກກໍ່ຕັ້ງຂຶ້ນມາໃສ່ການນຳພາຂອງຊຸມນຸມອິນ.ອັນນີ້ໄດ້ຖືກເຮັດໂດຍການກໍ່ຕັ້ງອົງການຕັ້ງຢູ່ຕາມຊຸມນຸມອິນ ໃຫ້ເປັນຜູ້ມີສ່ວນເຮັດວຽກນຳກັນໃນການນຳພາສາຍງານ ໃນຫມູ່ບ້ານສາມສາຍງານຊຶ່ງໄດ້ຖືກກໍ່ຕັ້ງໃນເມືອງຊີອາເຕີນ ເຊັ່ນໄຕຣ,ຊາວອິສ,ແລະຊາວແວສ.

ອົງການສາຍງານໃນ ຫມູ່ບ້ານແມ່ນໃຜ?

ອົງການນຳພາທີ່ປະສານງານຄວາມມຸ່ງຫມາຍປະຕິບັດງານຂອງກົດຫມາຍແມ່ນ: the Urban League of Metropolitan Seattle; Southwest Youth and Family Services; ແລະກຸ່ມປະຕິບັດງານຂອງອົງການທີ່ຖືກນຳພາໂດຍ Rainier Vista Boys and Girls Club.

ການບໍລິການແມ່ນ ຫຍັງແດ່?

ຊາວຫນຸ່ມຈະຖືກສົ່ງຕໍ່ໄປເອົາການບໍລິການໂດຍຜ່ານໂຮງຮຽນ,ອົງການຊຸມນຸມອິນ,ສານເຍົາວະຊົນ,ຕຳຣວດ,ພະນັກງານລົງຟື້ນຖານຕາມຖນົນ,ແລະສູນກາງສວນແລະບ່ອນພັກຜ່ອນສຳລັບຊາວຫນຸ່ມຂອງເມືອງຊີອາເຕີນ.ການບໍລິການກວ້າງຂວາງທີ່ຖືກປະສານງານຢູ່ໃນຣະດັບຂອງຊຸມນຸມອິນ ລວມເອົາ:

- ການລົງຟື້ນຖານຕາມຖນົນ
- ການຄວບຄຸມກຳກັບນຳກຳຣະນີເວທສານ
- ການຝຶກຝົນການໃຊ້ແທນການຮຸກຮານ
- ການແນະນຳຊູ້ມຊ່ວຍເຫລືອ
- ວຽກງານແລະການຝຶກຝົນສຳລັບຊາວຫນຸ່ມ
- ໂຄງການສົມທົບເງິນທຶນສຳລັບຫມູ່ບ້ານທີ່ຮັບໃຊ້ຊາວຫນຸ່ມຜູ້ທີ່ມີເງື່ອນໄຂໄດ້ຮັບ
- ເວລາປິດເປີ້ອນອອກໄປຂອງສູນກາງຊາວຫນຸ່ມທີ່ມີໂຄງການທີ່ຖືກເຮັດຂຶ້ນມາສຳລັບຊາວຫນຸ່ມ

ເພີ້ມເຕີມອີກ,ເຈົ້າຫນ້າທີ່ສຳລັບໂຮງຮຽນໂດຍສະເພາະ "ໃນເຄືອງແບບ" ໄດ້ຖືກແຕ່ງຕັ້ງໃສ່ມີເດີນສະກຸລສີ່ບ່ອນ – Aki Kurose, Denny, Mercer, ແລະ Washington Middle School.

ພາກສ່ວນສຳຄັນອີກອັນນຶ່ງຂອງກົດຫມາຍແມ່ນທີມງານລົງຟື້ນຖານຕາມຖນົນຊຶ່ງປະກອບດ້ວຍບຸກຄົນຜູ້ທີ່ມີຄວາມເຊື່ອຖືໄດ້ຕາມຖນົນຜູ້ທີ່ຈະພົບກັບຊາວຫນຸ່ມ "ບ່ອນທີ່ເຂົາເຈົ້າຢູ່". ເຈົ້າຫນ້າທີ່ຕັ້ງຢູ່ຕາມໂຮງຮຽນແລະພະນັກງານລົງຟື້ນຖານຕາມຖນົນຈະຟັງ,ເອົາຄຳຊີ້ນຳ,ຣາຍຣະອຽດ ໃຫ້ແກ່ຊາວຫນຸ່ມ,ຊ່ວຍເຫລືອເຂົາເຈົ້າໃນການແກ້ໄຂບັນຫາຄວາມຂັດແຍ້ງແລະຊຸກຍູ້ແນະນຳເຂົາເຈົ້າໃຫ້ເຮັດການຕັດສິນໃຈທີ່ແຂງແຮງ,ມີຜົນດີ.

ກ່ອນທີ່ກົດຫມາຍເລີ້ມຕົ້ນຂຶ້ນມາ,ຕຳຣວດເມືອງຊີອາເຕີນໄດ້ອອກລາດຕາເວນຢ່າງນັ້ນຫນັກຫລາຍຂຶ້ນ,ເພີ້ມຈຳນວນເຈົ້າຫນ້າທີ່ຕຳຣວດເປັນສອງເທົ່າຜູ້ທີ່ເຮັດວຽກໃນຫນ່ວຍແກ້ງອັນທະພານຂອງເຂົາເຈົ້າ.ຫນ່ວຍແກ້ງກາງຄືນຫນ່ວຍໃຫມ່ໄດ້ປະຕິບັດງານຢູ່ໃນຂອບເຂດອ້ອມແອ້ມໂຮງຮຽນເພື່ອຈະເພີ້ມໃສ່ຫນ່ວຍກາງຄືນສອງຫນ່ວຍ.

ການອອກເງິນທຶນ

ເມືອງໄດ້ລົງທຶນ $8 ລ້ານໂດລາໃສ່ໃນກົດຫມາຍໃນຣະຫວ່າງປີ 2009 ແລະ 2010 ຊຶ່ງຈ່າຍເງິນໃຫ້ສຳລັບການບໍລິການແລະໂຄງການທີ່ຖືກຍົກລາຍຊື່ຢູ່ໃນເຈ້ຍຂ່າວໃບນີ້.

ເພື່ອຣາຍຣະອຽດເພີ້ມເຕີມ

Mariko Lockhart
ຜູ້ອຳນວຍການ, Seattle Youth Violence Prevention Initiative
mariko.lockhart@seattle.gov
206-233-7915

Jamila Taylor
Central Neighborhood
ຜູ້ປະສານງານສາຍງານ
jtaylor@urbanleague.org
206-979-8548

Robert Gant
Southwest Neighborhood
ຜູ້ປະສານງານສາຍງານ
rgant@swyfs.org
206-937-7680 ext. 109

Heidi Henderson-Lewis
Southeast Neighborhood
ຜູ້ປະສານງານສາຍງານ
hhendersonlewis@positiveplace.org
206-436-1898

ທາງແວບໄຊທ์:
www.youthinitiative.seattle.gov